# ເລື່ອງມ່ວນໆຂອງສັດ


ໂດຍ: ຟິລິບ ກິບສັນ

ແປ: ດາລາວົງ ກັນລະຍາ

ຮູບປະກອບໂດຍ: ໄຊຊະຫຼອງ





Action with Lao Children

# ເລື່ອງມ່ວນໆ ຂອງສັດ

ສະມາຄົມ ຮ່ວມນ້ຳໃຈກັບເດັກນ້ອຍລາວ
Action with Lao Children



ຂຽນໂດຍ ຟີລິບ ກິບສັນ

ແປໂດຍ ດາລາວົງ ກັນລະຍາ

ຮູບປະກອບ ໄຊສະຫຼອງ ເພັດດວງຄຳ

# ເລື່ອງມ່ວນໆຂອງສັດ

All about animals, Book 10

Word by Word English Readers.

ປຶ້ມປະເພດ ວິທະຍາສາດທຳມະຊາດ ສຳລັບຊັ້ນປະຖົມ

ຂຽນໂດຍ: ຟີລິບ ກິບສັນ Philip Gibson

ແປໂດຍ: ດາຣາວົງ ກັນລະຍາ

ຮູບປະກອບ: ສະຫລອງໄຊ ເພັດດວງຄຳ

ບັນນາທິການ: ດວງເດືອນ ບຸນຍາວົງ

ຈັດໜ້າອອກແບບ: ບໍລິສັດດອກເກດ ການພິມຈຳກັດ

ຈັດພິມໂດຍ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)
2000 ຫົວ

ອຸປະຖຳໂດຍ: JICA ອົງການຮ່ວມມືສາກົນຂອງປະເທດຍີ່ປຸ່ນ ໄຈ້ກ້າ
Japan International Cooperation Agency
3000 ຫົວ

© ສະຫງວນລິຂະສິດ ບົດພາສາລາວແລະຮູບ:

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ

ທະບຽນອະນຸຍາດພິມເລກທີ 091 ພຈ 21062007

ພິມຄັ້ງທີ 1: ກໍລະກົດ 2007

ຈຳນວນພິມ 5000 ຫົວ

ພິມທີ່ ຈຳປາ ການພິມ

# ສາລະບານ


ຄຳນຳ .................... 4
1. ເລື່ອງມ່ວນໆຂອງສັດ .................... 5
2. ໝາ .................... 9
3. ແມວ .................... 13
4. ເສືອ .................... 17
5. ໝູ .................... 21
6. ຊ້າງ .................... 25
7. ງູ .................... 29
8. ລີງ .................... 33
9 ~~8~~. ນົກແກ້ວ .................... 37
10. ໄກ່ .................... 41
11. ນົກເຄົ້າ .................... 45
12. ງົວ .................... 49
13. ຄວາຍ .................... 53
14. ເຕົ່າ .................... 57
15. ປາສະຫຼາມ .................... 61
16. ຕໍ່ .................... 65
17. ປາວານ .................... 69
18. ເຜິ້ງ .................... 75
19. ໂດນຟິນ .................... 80
20. ມົດ .................... 85
21. ໜູ .................... 90
22. ເຈຍ .................... 95
23. ຍຸງ .................... 100
24. ແມງກະເບື້ອ .................... 105
25. ການປ່ຽນແປງໂລກຂອງ .................... 111

# ຄຳນຳຂອງ ຜູ້ຈັດພິມ

ຊີວິດຂອງສັດ ມີຫຼາຍອັນຫຼາຍແນວໜ້າສົນໃຈ ບໍ່ວ່າຈະເປັນສັດປ່າ ສັດລ້ຽງ ສັດນ້ຳ ຫຼື ສັດບົກ. ໂລກຂອງເຮົາໃນປັດຈຸບັນ ກຳລັງປະເຊີນກັບວິກິດການດ້ານສິ່ງແວດລ້ອມ ໂດຍສະເພາະ ເລື່ອງພູມອາກາດທີ່ປ່ຽນແປງໄປຢ່າງຮ້າຍແຮງ ແນ່ນອນວ່າ ການປ່ຽນແປງທັງໝົດ ກະທົບກະເທືອນໃສ່ສິ່ງມີຊີວິດທັງມວນທີ່ຢູ່ຮ່ວມກັນ ເທິງໂລກໜ່ວຍນີ້ ໃນນັ້ນ ຄົນແລະສັດ ຈະຖືກຫຼາຍກວ່າໝູ່.

"ເລື່ອງມ່ວນໆຂອງສັດ" ຈະໃຫ້ຂໍ້ມູນພື້ນຖານ ກ່ຽວກັບສັດຫຼາຍຊະນິດຫຼາຍແນວ ທີ່ເປັນເພື່ອນຮ່ວມໂລກຂອງພວກເຮົາ ພໍ່ແມ່ຫຼາຍຄົນ ອາດເປັນຄືພໍ່ແມ່ ຂອງ ທ້າວລີ ກັບ ນາງແພັດ ທີ່ຫ່ວງໃຍລູກ ຢ້ານລູກໄດ້ຮັບອັນຕະລາຍຈາກສັດມີພິດ ແລະເດັກນ້ອຍຫຼາຍຄົນ ກໍຄົງຈະຄືກັບ ທ້າວລີ ແລະນາງແພັດທີ່ຢາກຈະລ້ຽງສັດບາງຊະນິດໄວ້ເປັນໝູ່. ຄວາມຮູ້ເລັກໆນ້ອຍໆໃນປຶ້ມນີ້ ອາດຊ່ອຍໃຫ້ຕັດສິນໃຈໄດ້ດີຂຶ້ນ,ມີຄວາມເຂົ້າໃຈແລະເຫັນໄດ້ໃນຄວາມສຳຄັນຂອງສິ່ງມີຊີວິດທຸກຢ່າງໃນໂລກ ທີ່ຕ້ອງເພິ່ງພາອາໄສກັນແລະກັນ.

ຄູສອນ ອາດນຳໃຊ້ບົດອ່ານ ຄຳຖາມ ໄປຕື່ມບົດຮຽນໄດ້ຕາມຄວາມເໝາະສົມ ເພາະຂໍ້ມູນໃນປຶ້ມນີ້ ກໍ່ຖືກຕ້ອງ ຜ່ານການຄົ້ນຄວ້າຫຼາຍສົມຄວນ ແຕ່ທັງນີ້ ກໍຄົງບໍ່ປາສະຈາກຄວາມຂາດຕົກບົກພ່ອງໄດ້ ເຊັ່ນວ່າ ບາງບົດທີ່ເວົ້າເຖິງສັດທະເລ ອາດຈະມີລັກສະນະສາກົນໄປແດ່. ໃນກໍລະນີແບບນັ້ນ ຂໍໃຫ້ພໍ່ແມ່ຄູສອນຊ່ອຍແນະນຳເດັກນ້ອຍຕື່ມດ້ວຍ.

ການໄດ້ຮຽນຮູ້ຊີວິດຂອງສັດປ່າ ທຳມະຊາດແນວນີ້ ອາດມີສ່ວນຈູງໃຈໃຫ້ເດັກນ້ອຍສົນໃຈຢາກສຶກສາຮຽນຮູ້ກ່ຽວກັບສັດຫຼາຍຂຶ້ນ ແລະກາຍເປັນຜູ້ໜຶ່ງທີ່ ຮັກແພງຫ່ວງໃຍສິ່ງແວດລ້ອມ ຢ່າງຈິງໃຈ.

ວຽງຈັນ ມິຖຸນາ 2007

ຄະນະຈັດພິມ ALC

# 1.ເລື່ອງມ່ວນໆຂອງສັດ

ຄຳສັບໃໝ່ : ບ່ອນຢູ່ໃນປ່າ / ແກ່ວ
ປ່າເຖື່ອນ / ອັນຕະລາຍ
ອາຍຸໄຂ / ລະຍະມີຊີວິດຢູ່ໂດຍສະເລ່ຍ
ເຫີງນານ / ເວລາດົນ

ເຈົ້າຮູ້ບໍ່ວ່າ ໃນໂລກເຮົານີ້ມີສັດແຕກຕ່າງກັນຈັກຊະນິດ ? ໂລກນີ້ມີສັດຫຼາຍຊະນິດແທ້ໆ ພວກເຮົາບໍ່ສາມາດນັບໄລ່ມັນໄດ້ໝົດ.



ພວກເຮົາຮູ້ຊື່ສັດບາງແນວແລ້ວແມ່ນບໍ່ ? ພວກເຮົາຮູ້ຊື່ສັດບາງຈຳພວກທີ່ຄົນມັກຫາມາລ້ຽງ ເປັນສັດລ້ຽງຢູ່ນຳ ເຊັ່ນ: ໝາ ແມວ ນົກແກ້ວ ເປັນຕົ້ນ.

ພວກເຮົາຍັງຮູ້ຊື່ສັດທີ່ຄົນເອົາມາລ້ຽງໄວ້ໃຕ້ລ່າງ ຢູ່ຄອກ ຢູ່ເລົ້າອີກ ເຊັ່ນ: ງົວ ຄວາຍ ໄກ່ ເປັດ ໝູ ເປັນຕົ້ນ . ພວກເຮົາຍັງຮູ້ຊື່ສັດປ່າບາງຈຳພວກອີກ ເຊັ່ນ ເສືອ ງູ ລີງ ຊ້າງ ໝູ ... ບາງເທື່ອພວກເຮົາກໍເຫັນສັດເຫຼົ່ານີ້ຢູ່ສວນສັດ. ພວກເຮົາຕ້ອງລະວັງ ເວລາຢູ່ໃກ້ສັດປ່າ ເພາະວ່າ ບາງຊະນິດອາດເປັນອັນຕະລາຍໄດ້.

ໃນປຶ້ມເຫຼັ້ມນີ້ ພວກເຮົາ ຈະຮຽນກ່ຽວກັບສັດຕ່າງໆ ຫຼາຍຊະນິດ.... ພວກເຮົາບໍ່ສາມາດຮຽນເລື່ອງສັດທັງໝົດໃນໂລກໄດ້ ມັນມີຫຼາຍໂພດ ແຕ່ພວກເຮົາຈະຮຽນກ່ຽວກັບບາງຈຳພວກເທົ່ານັ້ນ.

ພວກເຮົາຈະຮຽນຮູ້ວ່າສັດຕ່າງໆ ມັກກິນຫຍັງ ດຳລົງຊີວິດຢູ່ບ່ອນໃດແດ່ ໃນໂລກນີ້ ມັກໄປບ່ອນໃດ . ພວກເຮົາຍັງ ຈະຮຽນຮູ້ອີກວ່າ ສັດຕ່າງໆທີ່ຍັງໜຸ່ມນ້ອຍ ຢູ່ມີຫຼາຍປານໃດ ແລະພວກມັນມີອາຍຸໄຂ ດົນນານປານໃດ? ພວກເຮົາຈະໄດ້ຮຽນຮູ້ ກ່ຽວກັບສັດຈຳພວກທີ່ເປັນອັນຕະລາຍ ແລະພວກບໍ່ເປັນອັນຕະລາຍ.



ພວກເຮົາຈະຮຽນເລື່ອງເຫຼົ່ານີ້ໄປພ້ອມໆກັບໝູ່ເພື່ອນຂອງພວກເຮົາ ຄື ລີ ແພັດ ແລະ ທອມ. ຂະນະນີ້ ລີ ແພັດ ແລະ ທອມ ຢູ່ໃນຫ້ອງຮຽນ ພວກເຂົາກຳລັງລໍຖ້າຄູຢູ່ , ແພັດນັ່ງແຖວໜ້າ ສ່ວນລີ ນັ່ງຢູ່ໃກ້ໆກັບທອມ ໝູ່ຂອງລາວ.





ມື້ນີ້ເດັກນ້ອຍທຸກຄົນຕື່ນເຕັ້ນຫຼາຍ ເພາະວ່າພວກເຂົາຢາກຟັງຄູເວົ້າເລື່ອງສັດຫຼາຍແທ້ໆ . ພວກເຂົາຢາກເຫັນຮູບທີ່ເອື້ອຍຄູຈະເອົາມາໃຫ້ເບິ່ງນຳອີກ . ຜູ້ໃດກໍຄຶດວ່າ ການຮຽນມື້ນີ້ ຄົງຈະມ່ວນແລະໜ້າສົນໃຈຫຼາຍ.

# ລີ ແລະ ທອມ ລົມກັນ ເລື່ອງສັດ

ລີ: ທອມ ເຈົ້າຢາກຮຽນກ່ຽວກັບສັດຈຳພວກໃດ ?

ທອມ: ຂ້ອຍຢາກຮຽນກ່ຽວກັບສັດອັນຕະລາຍ ເຊັ່ນ ເສືອ ງູ

ລີ: ຂ້ອຍກໍຄືກັນ ຂ້ອຍສົນໃຈສັດປ່າຫຼາຍກວ່າສັດລ້ຽງຢູ່ຄອກ.

ທອມ: ແມ່ນແທ້ ສັດປ່າໜ້າສົນໃຈຫຼາຍກວ່າ.

ລີ: ແຕ່ຂ້ອຍກໍຢາກຮູ້ເລື່ອງ ໝູ ນຳອີກ.

ທອມ: ໝູ ຊັ້ນຫວະ ?

ລີ: ເອີ້ ຂ້ອຍຢາກຮູ້ທຸກຢ່າງກ່ຽວກັບໝູ ຢາກຮູ້ວ່າມັນກິນຫຍັງ ມັກໄປໃສ? ມີອາຍຸຍືນປານໃດ ເອີ ທຸກໆຢ່າງທັ້ນລະ !



ທອມ: ເປັນຫຍັງ ເຈົ້າຄືມາສົນໃຈເລື່ອງໝູແທ້ ? ບໍ່ມີໃຜມັກໝູບ່າ !

ລີ: ແຕ່ຂ້ອຍມັກເດ້ ໃນບັນດາສັດທັງຫຼາຍໃນໂລກນີ້ ຂ້ອຍເຫັນວ່າ ໝູ ໜ້າສົນໃຈທີ່ສຸດ ເອີ ໝູ ກັບ ງູ ນີ້ລະ.

ທອມ: ງູ ນຳອີກຫວະ ?

ລີ: ແມ່ນແລ້ວ ຂ້ອຍຢາກເວົ້າກັບນ້ອງສາວຂ້ອຍ ກ່ຽວກັບເລື່ອງ ໝູ ແລະ ງູ ນີ້ລະ.

ທອມ: ເປັນຫຍັງ?

ລີ: ເພາະນ້ອງຂ້ອຍບໍ່ມັກ ງູ ກັບ ໜູ ບໍ່ມັກແທ້ໆນີ້ໃດ໋ ເວົ້າຮອດກະບໍ່ໄດ້ນ່າ.

ທອມ: ແລ້ວເປັນຫຍັງ ຈຶ່ງບໍ່ມັກລະ ?

ລີ: ລາວບໍ່ມັກສັດອັນຕະລາຍ ແລະສັດຂີ້ດຽດ

ທອມ: ນີ້ ເຈົ້າຄຶດເຮັດບໍ່ດີ ກັບນ້ອງສາວເຈົ້າແມ່ນບໍ່ ?

ລີ: ບໍ່ນ່າ ຂ້ອຍຊິເຮັດບໍ່ດີກັບລາວ ກໍຕໍ່ເມື່ອມັນບໍ່ດີກັບຂ້ອຍທໍ່ນັ້ນ.



ຫ້າມຈຳໜ່າຍ

## ຄຳຖາມ

1. ພວກເຮົາສາມາດນັບສັດຊະນິດຕ່າງໆທັງໝົດໄດ້ບໍ່ ?
2. ສັດຊະນິດໃດ ທີ່ບາງຄັ້ງກໍເປັນອັນຕະລາຍໄດ້ ?
3. ພວກເຮົາຈະຮຽນຮູ້ເລື່ອງນີ້ ໄປພ້ອມໆກັບໃຜແດ່ ?
4. ລີນັ່ງຢູ່ບ່ອນໃດ?
5. ເປັນຫຍັງພວກເດັກນ້ອຍຈຶ່ງຕື່ນເຕັ້ນແທ້?
6. ລີຢາກຮຽນກ່ຽວກັບສັດຈຳພວກໃດ ?
7. ແລ້ວ ພວກເຈົ້າເດ້ ?

# 2. ໝາ

ຄຳສັບໃໝ່: ດີເລີດ / ດີທີ່ສຸດ ; ປ້ອງກັນ,
ຂະໜາດ, ໄດ້ຮຽນ / ເຄີຍຮຽນ,
ປ່າເຖື່ອນ / ຮ້າຍຂາດ

ພວກເຮົາສາມາດພົບເຫັນໝາຢູ່ເກືອບທຸກແຫ່ງຫົນໃນໂລກ. ໝາມີຫຼາຍຂະໜາດ ຫຼາຍສີ ຫຼາຍຊົງ ບາງຊະນິດໃຫຍ່ຫຼາຍ ບາງຊະນິດກໍນ້ອຍໆ ບາງຊະນິດ ຂົນດຳ ອີກບາງຊະນິດຊ້ຳຂົນຂາວ ຫຼື ສີນ້ຳຕານ ບາງຊະນິດ ມີຂົນຫຼາຍສີປົນກັນຮອດ ສອງສາມສີ ແລະບາງຊະນິດ ກໍຂົນທ້ຽນຈົນບໍ່ມີຂົນເລີຍ .



ໝາອາຍຸບໍ່ຍືນທໍ່ກັບຄົນ. ອາຍຸໄຂຂອງມັນ ມີແຕ່ ສິບຫ້າປີເທົ່ານັ້ນ. ໝາຊະນິດໃຫຍ່ ບໍ່ຍືນທໍ່ໝາຊະນິດນ້ອຍ. ໝາໃຫຍ່ບາງຊະນິດ ມີອາຍຸໄຂພຽງແຕ່ສິບປີ.
ໝາສ່ວນຫຼາຍມັກກິນຊີ້ນ ບໍ່ມັກກິນຜັກຫຼາຍ ຖ້າເຮົາເບິ່ງແຂ້ວຂອງໝາຈະເຫັນວ່າ ແຂ້ວ ເຫຼົ່ານັ້ນເໝາະກັບ ການກິນຊີ້ນທີ່ສຸດ ບໍ່ຄືກັບແຂ້ວຂອງຄົນ ເຮົາໃດ໋. ແຂ້ວຂອງຄົນເໝາະສຳລັບກິນອາຫານແຕກຕ່າງກັນຫຼາຍຢ່າງ.

ບາງເທື່ອ ພວກເຮົາມັກເວົ້າວ່າ "ໝາເປັນເພື່ອນຜູ້ດີເລີດຂອງມະນຸດ". ນີ້ແມ່ນ ຍ້ອນວ່າໝາມັກຢູ່ກັບຄົນ ມັກຢູ່ໃນເຮືອນ ຫຼືຢູ່ໃກ້ໆບ້ານຄົນ. ໝາຫຼິ້ນກັບພວກເຮົາ ກໍໄດ້ ແລະ ຍັງສາມາດເຮັດວຽກຊ່ອຍຄົນໄດ້ອີກ. ໝາທີ່ຢູ່ກັບຄົນແລ້ວບໍ່ເປັນສັດ ປ່າ . ເວລາພວກເຮົານອນຕອນກາງຄືນ ໝາສາມາດເຝົ້າຍາມເຮືອນ ແລະຄົນ ທີ່ຢູ່ຂ້າງໃນ . ໝາສາມາດໄດ້ຍິນດີຫຼາຍ ມັນໄດ້ຍິນບາງສິ່ງບາງຢ່າງ ທີ່ຄົນເຮົາ ບໍ່ສາມາດໄດ້ຍິນ !

ໂດຍທົ່ວໄປ ໝາບໍ່ເປັນອັນຕະລາຍສຳລັບຄົນ ແມ່ນແຕ່ເດັກນ້ອຍ ກໍສາມາດຫຼິ້ນກັບໝາໄດ້ ບໍ່ເປັນຫຍັງ. ເດັກນ້ອຍໆຫຼິ້ນກັບໝາກໍໄດ້ ແຕ່ຕ້ອງລະວັງ ພວກເຮົາຕ້ອງເຮັດດີກັບໝາ ບໍ່ເຮັດໃຫ້ມັນເຈັບ ແລະໃຈຮ້າຍ ເພາະວ່າຖ້າໝາໃຈຮ້າຍຂຶ້ນມາ ມັນອາດເປັນອັນຕະລາຍໄດ້.

ພວກເຮົາສາມາດແອບສອນໝາໄດ້ຫຼາຍຢ່າງ. ພວກມັນຮຽນຮູ້ໄດ້ໄວ ກວ່າສັດ



ອື່ນໆຫຼາຍຈຳພວກ ພວກມັນສາມາດເຂົ້າໃຈທ່າທີ ແລະ ຄຳເວົ້າບາງຄຳ ເຊັ່ນວ່າ " ມາໜີ້ ! " ໄປ ! " ນັ່ງລົງ ! " ຢູ່ໜີ້ ! ເປັນຕົ້ນ.



# ແພັດກັບພໍ່ ລົມກັບເລື່ອງໝາ

ແພັດ: ພໍ່ເອີຍ ຢູ່ໂຮງຮຽນມື້ນີ້ ພວກລູກໄດ້ຮຽນຫຼາຍແນວກ່ຽວກັບໝາ.

ພໍ່: ແທ້ຫວາ ? ລູກຮຽນຫຍັງແດ່ລະ? ເລົ່າໃຫ້ພໍ່ຟັງແນ່ !

ແພັດ: ກະໄດ້ ! ພວກລູກໄດ້ຮຽນເລື່ອງຂະໜາດຕ່າງໆຂອງໝາ ພໍ່ ?

ພໍ່: ອີ່ຫຼີຫວະ ?

ແພັດ: ອີ່ຫຼີ ໝາມີຫຼາຍຂະໜາດເອົາແທ້ເອົາວ່າ ທັງມີຫຼາຍສີນຳອີກ ພວກລູກຍັງໄດ້ຮຽນຮູ້ອີກວ່າໝາເປັນເພື່ອນທີ່ດີເລີດຂອງຄົນນຳອີກ !



ພໍ່: ເພື່ອນທີ່ດີເລີດຂອງຄົນວ່າຕີ ? ເປັນຫຍັງຈຶ່ງວ່າແນວນັ້ນ ?

ແພັດ: ເພາະວ່າ ໝາສາມາດຢູ່ກິນ ກັບພວກເຮົາ ຫຼິ້ນເປັນໝູ່ກັບພວກເຮົາ ຊ້ຳຍັງສາມາດເຮັດ ວຽກບາງແນວໃຫ້ພວກເຮົາ ປ້ອງກັນເວນຍາມໃຫ້ພວກເຮົາໃນຍາມກາງຄືນອີກ.

ພໍ່: ເອ ມັນປ້ອງກັນເວນຍາມໄດ້ແນວໃດ ?

ແພັດ: ກະພວກມັນຢູ່ເຝົ້າເຮືອນເວລາພວກເຮົາອອກໄປຂ້າງນອກ ຫຼືຍາມກາງຄືນເວລາພວກເຮົານອນຫຼັບ ມັນຫູດີ ໄດ້ຍິນດີກວ່າ.

ພໍ່: ແທ້ຫວາ ?



ແພັດ: ແທ້ລະບໍ ພວກມັນສາມາດໄດ້ຍິນແນວທີ່ຫູຄົນບໍ່ໄດ້ຍິນພຸ້ນລະ !

ພໍ່: ໂອ່ ເປັນຕາສົນໃຈອີ່ຫຼີເນາະ ພໍ່ບໍ່ຮູ້ເລື່ອງນີ້ມາກ່ອນເລີຍ ເວົ້າເລື່ອງທີ່ລູກໄດ້ຮຽນໃຫ້ພໍ່ຟັງອີກຕື່ມແດ່ .

ແພັດ: ພວກລູກໄດ້ຮຽນອີກວ່າ ໝາສ່ວນໃຫຍ່ບໍ່ປ່າເຖື່ອນຮ້າຍກາດ .

ພໍ່: ເອີ ເປັນຈັ່ງຊັ້ນຫວະ ?

ແພັດ: ແທ້ໆ ຖ້າເຮົາເຮັດດີນໍາມັນ ມັນກໍຈະບໍ່ເປັນອັນຕະລາຍ..

ພໍ່: ອັນນີ້ແມ່ນແທ້ໆ ພວກເຮົາຕ້ອງເຮັດດີກັບສັດ ແລະກະນໍາຄົນອີກ. ອີ່ນາງນ້ອຍໆ ກໍຄວນເຮັດດີໆກັບພວກອ້າຍຄືກັນ.

ແພັດ: ເຮັດດີນໍາອ້າຍຊັ້ນຫວະ ? ໂອ້ຍ ເລື່ອງນີ້ ລູກບໍ່ຮູ້ນໍາເດີ້ !



## ຄໍາຖາມ

1. ເປັນຫຍັງພວກເຮົາຈຶ່ງເວົ້າວ່າ ໝາເປັນເພື່ອນທີ່ດີເລີດຂອງຄົນ ?
2. ໝາສ່ວນໃຫຍ່ ປ່າເຖື່ອນ ໝົດບໍ່ ?
3. ໝາສາມາດປ້ອງກັນຄົນໄດ້ແນວໃດ ?
4. ໝາເຮັດຫຍັງທີ່ຄົນເຮົາເຮັດບໍ່ໄດ້ແດ່ ?
5. ໂດຍທົ່ວໄປແລ້ວ ແມ່ນໝາຂະໜາດໃດ ທີ່ອາຍຸບໍ່ຍືນ ?
6. ເປັນຫຍັງພວກເຮົາຈຶ່ງຕ້ອງເຮັດດີກັບໝາ ?
7. ແພັດຢາກເຮັດດີກັບອ້າຍບໍ່ ?

## 3. ແມວ

ຄຳສັບໃໝ່: ລ່າສັດ / ໂຫ່ເນື້ອ , ຂ້າ / ປະຫານ
ຕາ, ປະມານ / ເກືອບເທົ່າ, ກະໄດ້



ເຊັ່ນດຽວກັນກັບໝາ ແມວດຳລົງຊີວິດຢູ່ເກືອບທຸກແຫ່ງຫົນໃນໂລກ. ຫຼາຍຄົນຄິດວ່າແມວເປັນສັດລ້ຽງໃນເຮືອນທີ່ດີທີ່ສຸດ . ພວກເຂົາຄິດວ່າແມວເປັນສັດລ້ຽງທີ່ດີເລີດ ແລະຫນ້າສົນໃຈຫຼາຍກວ່າໝາ. ແມວອາດຈະໜ້າສົນໃຈຫຼາຍກວ່າໝາ ແຕ່ວ່າ ເປັນເລື່ອງຍາກທີ່ຈະເຝິກແອບແມວ ມັນບໍ່ຮຽນຮູ້ໄດ້ງ່າຍຄືກັບໝາ. ແມວມີຕາດີຫຼາຍ ທັງຍັງສາມາດເບິ່ງເຫັນໃນຕອນກາງຄືນອີກ. ແມວເກີດມາ ແລະມືນຕາເປັນເທື່ອທຳອິດ ເມື່ອອາຍຸໄດ້ ແປດ ຫາ ສິບສອງມື້. ແກ່ນຕາຂອງແມວນ້ອຍທຸກໂຕເປັນສີຄາມ.

ແມວບ້ານມັກອອກໄປທ່ຽວຍາມກາງຄືນເພື່ອຈະໄດ້ພົບພໍ້ກັບແມວໂຕອື່ນໆ ແລະໄປຫາເຫຍື່ອໂຕນ້ອຍໆນຳກັນ. ພວກມັນສາມາດລ່າແລະຂ້າສັດນ້ອຍ ເຊັ່ນ ໜູ ແລະ ງູ ໄດ້. ຖ້າມັນຂ້າສັດບາງຢ່າງ ເຊັ່ນວ່າ ໜູ ໄດ້ ມັນກໍຈະເອົາຄືນມາ ເຮືອນເພື່ອໃຫ້ຄົນເຫັນ.

ແມວຍັງມີແຂ້ວດີຫຼາຍ. ທຳອິດ ແມວນ້ອຍຈະມີແຂ້ວແຕ່ຊາວຫົກເຫຼັ້ມ ມີຢູ່ເທົ່າ ນີ້ ຈົນອາຍຸໄດ້ປະມານ ສອງ ຫາ ສາມອາທິດ ຫຼັງຈາກນັ້ນເມື່ອອາຍຸໄດ້ປະມານ ຊາວສີ່ອາທິດ ມັນຈະມີແຂ້ວປົ່ງຕື່ມຮອດ ສາມສິບ ເຫຼັ້ມ.
ແມວມີອາຍຸໄຂຍາວກວ່າໝາຫຼາຍ ສ່ວນໃຫຍ່ມັນຢູ່ອາຍຸຍືນປະມານສາມສິບ ປີ.
ຖ້າວ່າພວກເຮົາລ້ຽງແມວ ພວກເຮົາບໍ່ຈຳເປັນຕ້ອງອາບນ້ຳໃຫ້ມັນ.

ແມວຮູ້ຈັກຢູ່ຢ່າງສະອາດ  ພວກເຮົາຈຶ່ງບໍ່ຈຳເປັນອາບນ້ຳໃຫ້ແມວ ແຕ່ຕ້ອງຫວີ ຂົນໃຫ້ມັນແດ່  ພວກເຮົາຄວນພະຍາຍາມຫວີຂົນໃຫ້ແມວທຸກໆມື້.



# ລີ ກັບ ແພັດລົມກັນເລື່ອງແມວ

ລີ: ຂ້ອຍບໍ່ຢາກມີແມວເລີຍ ຂ້ອຍຮັກໝາຂອງພວກເຮົາຫຼາຍ ແມວຄື ຊິບໍ່ເປັນໝູ່ດີ ຄືກັບໝາດອກ.

ແພັດ: ຂ້ອຍກະຮັກໝາຂອງພວກເຮົາຄືກັນ ແຕ່ລົງຈະດີ ຖ້າມີແມວອີກຈັກໂຕ ຂ້ອຍຢາກລ້ຽງແມວນ້ອຍໆຈັກໂຕເບິ່ງແທ້ໆ ອາຍຸຈັກໜຶ່ງ ຫລື ສອງອາທິດກໍໄດ້ນ່າ.

ລີ: ເພິ່ນບໍ່ເອົາແມວນ້ອຍໆປານນັ້ນມາລ້ຽງດອກ.

ແພັດ: ລ້ຽງໃດ໋ ເຮົາເຈົ້າລ້ຽງກັນຢູ່ ເຮົາເຈົ້າເອົານົມ ເອົາປາໃຫ້ມັນກິນ. ແມວມັກກິນນົມ ກັບປາຫຼາຍ.



ລີ: ແມວນ້ອຍກິນຍັງບໍ່ເປັນດອກ ພວກມັນມີແຕ່ເລຽເອົາ ພວກມັນເລຽກິນນົມ ຕາກໍຍັງບໍ່ທັນມືນຊ້ຳ ແຂ້ວກໍບໍ່ທັນມີຈັກເຫຼັ້ມ !

ແພັດ: ກະຢ່າ ຈັ່ງໃດ໋ ຂ້ອຍກະຍັງຢາກມີໄວ້ຈັກໂຕ ຂ້ອຍຄຶດວ່າ ແມວໜ້າຮັກກວ່າໝາຫຼາຍ.

ລີ: ຄັນຊັ້ນໝາຂອງພວກເຮົາເດ້ ? ບາດມັນໄປໄລ່ແມວຂອງເຈົ້າ ແລ້ວກັດມັນຕາຍເດ້ ຊິເຮັດແນວໃດ ?

ແພັດ: ບໍ່ດອກ ມັນຊິບໍ່ເປັນແນວນັ້ນ ເຈົ້າກະເວົ້າໄປໂລເລ ! ຂ້ອຍສາມາດປົກປ້ອງແມວຂ້ອຍໄວ້ໄດ້ກໍແລ້ວກັນນ່າ ຂ້ອຍຊິດູແລຈົນກວ່າມັນຊິໃຫຍ່ພໍຊິອອກໄປທ່ຽວຫຼິ້ນຂ້າງນອກກັບແມວໂຕອື່ນໆໄດ້.

ລີ: ຊັ້ນ ຂ້ອຍຊິຄຶດວ່າ ເຈົ້າມັກແມວ ຍ້ອນເຈົ້າເປັນແມ່ຍິງເນາະ ! ປົກກະຕິແລ້ວ ພວກແມ່ຍິງມັກແມວ ສ່ວນວ່າຜູ້ຊາຍຊິຄຶດວ່າໝາດີກວ່າ.

ແພດ: ບໍ່ເດີ້ ພວກເຮົາບໍ່ຄຶດແບບນັ້ນດອກ !

ລີ: ຄຶດນ່າ ພວກເຮົາຄຶດແບບນັ້ນແຫຼະ!

ແພັດ: ບໍ່ນ່າ ບໍ່ແມ່ນວ່າຜູ້ຊາຍໝົດທຸກຄົນຊິຄຶດຄືກັບເຈົ້າ ຜູ້ຊາຍລາງຄົນຄຶດແບບດຽວອ້ອຍຕ້ອຍກັບແມ່ຍິງ !

ແມວຕາດີຫຼາຍ



## ຄຳຖາມ

1. ພວກເຮົາສາມາດພົບເຫັນແມວຢູ່ໃນສ່ວນໃດຂອງໂລກແດ່ ?
2. ເວລາໃດ ແມວມັກອອກໄປຂ້າງນອກ ?
3. ພວກມັນອອກໄປຂ້າງນອກເຮັດຫຍັງ ?
4. ເມື່ອແມວອາຍຸໄດ້ປະມານ ຊາວສີ່ອາທິດ ມັນມີແຂ້ວຈັກເຫຼັ້ມ ?
5. ອາຍຸໄຂຂອງແມວຈັກປີ ?
6. ເປັນຫຍັງຈຶ່ງບໍ່ຈຳເປັນອາບນ້ຳໃຫ້ແມວ ?
7. ແມວນ້ອຍມັກເລຽ ແລະກິນຫຍັງແດ່ ?

# 4. ເສືອ

ຄໍາສັບໃໝ່: ແຂງແຮງ
ໃຫຍ່ທີ່ສຸດ
ທະວີບອາຊີ
ສ່ວນໜຶ່ງ

ແມວທີ່ພວກເຮົາລ້ຽງໄວ້ ເອີ້ນວ່າ " ແມວບ້ານ " ຍັງມີ ແມວຊະນິດອື່ນອີກຫຼາຍ ແມວ ທີ່ເປັນເຊື້ອສາຍດຽວກັບແມວ. ແມວເຫຼົ່ານັ້ນເປັນສັດປ່າ ແລະບາງຊະນິດ



ກໍເປັນອັນຕະລາຍ. ເສືອເປັນແມວປ່າຊະນິດໜຶ່ງ .

ເສືອແມ່ນແມວປ່າຊະນິດໃຫຍ່ທີ່ສຸດໃນໂລກ, ມັນໃຫຍ່ກວ່າແມວອື່ນໆທຸກຊະນິດ ມັນແຂງແຮງ ແລະແລ່ນໄວຫຼາຍ. ສາມາດແລ່ນໄວກວ່າຄົນອີກ ດ້ວຍເຫດນີ້ແລະ ຍ້ອນຂະໜາດອັນໃຫຍ່ໂຕຂອງມັນ ເສືອຈຶ່ງເປັນສັດອັນຕະລາຍຫຼາຍ. ພວກເຮົາ ຄວນຢູ່ໃຫ້ໄກຈາກເສືອໄວ້ ແລະ ຈະເປັນການດີທີ່ສຸດ ທີ່ຈະໄປເບິ່ງເສືອຢູ່ສວນສັດ

ຫຼືບ່ອນ ອື່ນໆ ທີ່ເພິ່ນຈັດໄວ້ເປັນພິເສດ.

ທະວີບອາຊີແມ່ນຖິ່ນກຳເນີດຂອງເສືອ. ເພິ່ນບໍ່ອາດພົບເຫັນເສືອຢູ່ພາກສ່ວນອື່ນໆຂອງໂລກ. ແຕ່ລະປີ ຢູ່ທະວີບອາຊີ ມີຄົນຂ້າເສືອປ່າໄປຫຼາຍໂຕ. ດ້ວຍເຫດນີ້ເອງ ໃນປັດຈຸບັນ ຈຶ່ງບໍ່ມີເສືອເຫຼືອຢູ່ໃນປ່າຫຼາຍ. ທຸກວັນນີ້ ເສືອຈຳນວນໜຶ່ງໃນໂລກນີ້ ອາໄສຢູ່ໃນສວນສັດ ຫຼືສະຖານທີ່ພິເສດອື່ນໆ . ເມື່ອເສືອໄດ້ເຂົ້າມາຢູ່ໃນສະຖານທີ່ເຫຼົ່ານີ້ ຜູ້ຄົນທີ່ເຮັດວຽກຢູ່ຫັ້ນກໍສາມາດປົກປ້ອງຄຸ້ມຄອງພວກມັນໃຫ້ພົ້ນຈາກການລ່າແລະຂ້າຂອງມະນຸດໄດ້.

ເສືອດຳລົງຊີວິດຢູ່ໃນປ່າ ດ້ວຍການລ່າເຫຍື່ອ ຂ້າສັດປ່າອື່ນໆເປັນອາຫານ. ຄືກັນກັບແມວ ມັນມີສາຍຕາດີຫຼາຍ ຕາມທຳມະດາແລ້ວ ເສືອອອກລ່າເຫຍື່ອແຕ່ໃນຕອນກາງຄືນເທົ່ານັ້ນ . ບາງຄັ້ງຖ້າມັນຫິວ ຫຼື ໂມໂຫຫຼາຍກໍສາມາດລ່າແລະຂ້າຮອດຄົນໄດ້.



ຫ້າມຈຳໜ່າຍ

ໂດຍທົ່ວໄປ ແມວບໍ່ມັກລົງນ້ຳ ບໍ່ຄືກັບເສືອ. ເສືອແມ່ນ ແມວຊະນິດດຽວທີ່ມັກລົງນ້ຳ ບາງຄັ້ງເສືອລົງໄປໃນນ້ຳ ເພື່ອລ່າເອົາປາມາກິນ.

# ລີລົມກັບແມ່ ເລື່ອງເສືອ

ລີ: ແມ່ເອີ້ຍ ແມ່ຮູ້ບໍ່ວ່າ ໃນໂລກນີ້ ມີເສືອຢູ່ໃສແດ່ ?

ແມ່: ກໍຮູ້ລະຕິ ແມ່ເຫັນເສືອຢູ່ໃນໂທລະພາບ ອາທິດແລ້ວນີ້ເອງ ມັນຢູ່ສວນສັດ



ລີ: ລູກກໍຮູ້ວ່າ ມີເສືອຫຼາຍໂຕ ຢູ່ສວນສັດ ແຕ່ເສືອປ່າລະແມ່ ? ມື້ນີ້ ຢູ່ໂຮງຮຽນພວກລູກໄດ້ຮຽນກ່ຽວກັບເສືອປ່າ.

ແມ່: ເສືອປ່າຫວະ ? ໂອ້ ກະມີຢູ່ຫຼາຍບ່ອນຫຼາຍແຫ່ງລະບໍ ແມ່ນບໍ່ ?

ລີ: ບໍ່ເດີ ບໍ່ເດີ ເສືອມີແຕ່ຢູ່ໃນທະວີບອາຊີເທົ່ານັ້ນ.

ແມ່: ແທ້ໆຫວາ ?

ລີ: ແມ່ນແລ້ວ, ເສືອທັງໝົດທີ່ຢູ່ແຫ່ງຕ່າງໆ ໃນໂລກ ລ້ວນແຕ່ໄປຈາກທະວີບອາຊີທັງນັ້ນ, ເສືອ ແມ່ນແມວປ່າຊະນິດໃຫຍ່ທີ່ສຸດ.

ແມ່: ແມ່ກະຮູ້ ແມ່ມັກຈະຄຶດຫາແຕ່ເສືອທີ່ຢູ່ສວນສັດເທົ່ານັ້ນ ແມ່ບໍ່ຢາກເຫັນເສືອທີ່ຢູ່ໃນປ່າດອກ.

ລີ: ເປັນຫຍັງຈຶ່ງບໍ່ຢາກເຫັນລະ ?

ແມ່: ໂອ້ຍ ເສືອທັງໂຕໃຫຍ່ ທັງແຂງແຮງ ແລ່ນໄວ ແຂ້ວກະແຫຼມຄົມໃຫຍ່ກວັກຊວກ.



ລີ: ລູກຊ້ຳຢາກເຫັນເສືອໃນປ່າຈັກເທື່ອເດ້ ຢາກໄປລ່າມັນລອງເບິ່ງ

ແມ່: ໄປລ່າເສືອ ໂອ້ຍ ຕາຍແລ້ວ ຄືຊິເປັນອັນຕະລາຍ ຫຼາຍໃດ່ລູກ !

ລີ: ຊິບໍ່ເປັນດອກ ອາດຊິເປັນອັນຕະລາຍສຳລັບເສືອພຸ້ນຫຼາຍກວ່າ ແຕ່ຊິບໍ່ເປັນຫຍັງກັບລູກ !

ແມ່: ເປັນຫຍັງຈຶ່ງວ່າແນວນັ້ນ ?

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ